**ມິຊຊາອາທິດທີ 16 ກຳມົດທຳມະດາ ປີ B**

**ວັນທີ 18 ກໍລະກົດ 2021**



**ພຣະວໍຣະສານໂດຍນັກບຸນມັກໂກ 6, 30-34**

ໃນເວລານັ້ນ, ເມື່ອສິ້ນພາລະກິດແລ້ວ, ພວກອັກຄະສາວົກກໍມາໂຮມກັນຢູ່ໃກ້ພຣະເຢຊູເຈົ້າ ແລະລາຍງານເຖິງສິ່ງທີ່ໄດ້ກະທຳແລະໄດ້ສັ່ງສອນ. ພຣະອົງກ່າວກັບພວກເຂົາວ່າ: ຈົ່ງພາກັນໄປພັກຜ່ອນຢູ່ບ່ອນງຽບສະຫງັດກັບເຮົາຈັກໜ້ອຍໜຶ່ງຕ່າງຫາກ". ຕາມຈິງ, ຈຳນວນຄົນໄປໆມາໆມີຈຳນວນມາກມາຍຈົນພວກເຂົາບໍ່ມີເວລາຮັບປະທານອາຫານ. ດັ່ງນີ້, ຈຶ່ງພາກັນລົງເຮືອໄປບ່ອນງຽບສະຫງັດຕ່າງຫາກ. ຝູງຊົນເຫັນພຣະອົງແລະພວກສາວົກໜີໄປ. ແລະຫລາຍຄົນກໍຮູ້ບ່ອນຈະໄປ. ພວກເຂົາຈຶ່ງພາກັນແລ່ນໄປທາງບົກຈາກເມືອງຕ່າງໆ ແລະໄປຮອດບ່ອນກ່ອນ. ເມື່ອສະເດັດຂຶ້ນຈາກເຮືອ, ພຣະອົງແລເຫັນຝູງຊົນເປັນຈຳນວນມາກຈຶ່ງເກີດມີຄວາມເວດທະນາສົງສານ. ຍ້ອນວ່າພວກເຂົາເປັນດັ່ງຝູງແກະທີ່ຂາດນາຍຊຸມພາບານ. ພຣະອົງເລີຍເລີ່ມຕົ້ນສັ່ງສອນພວກເຂົາຢ່າງຍືດຍາວ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມກ 6, 30-34**

ເມື່ອພວກສາວົກຂອງພຣະເຢຊູເຈົ້າສິ້ນສຸດພາລະກິດແຫ່ງການປະກາດອານາຈັກຂອງພຣະເຈົ້າແລ້ວ, ພວກເຂົາໄດ້ກັບມາຫາພຣະອົງດ້ວຍຄວາມປິຕິຍິນດີ ແລະເລົ່າທຸກສິ່ງຢ່າງໃຫ້ພຣະອົງຊາບ. ແທນທີ່ພຣະເຢຊູເຈົ້າຈະຊົມເຊີຍແລະຍ້ອງຍໍສິ່ງທີ່ພວກເຂົາໄດ້ກະທຳ, ພຣະອົງພັດບອກໃຫ້ພວກເຂົາໄປພັກຜ່ອນຢູ່ບ່ອນງຽບສະງັດ ອັນເປັນສະຖານທີ່ສຳລັບການພາວະນາ, ການພົບປະສົນທະນາກັບພຣະເຈົ້າ. ເໝືອນດັ່ງພຣະເຢຊູເຈົ້າເອງ, ທຸກຄັ້ງກ່ອນທີ່ພຣະອົງຈະເລີ່ມພາລະກິດການເທດສອນ ພຣະອົງກໍອອກໄປບ່ອນງຽບສະງັດເພື່ອສວດມົນພາວະນາ. ແລະເມື່ອສິ້ນພາລະກິດເທດສະໜາແລ້ວ ພຣະອົງກໍອອກໄປທີ່ປ່ຽວເພື່ອພາວະນາກັບພຣະບິດາເຈົ້າ. ແລະໃນວັນນີ້, ພຣະເຢຊູເຈົ້າກໍບອກພວກສາວົກຂອງພຣະອົງໃຫ້ກະທຳດັ່ງດຽວກັນ. ແນ່ນອນເມື່ອພວກສາວົກປະສົບຜົນສຳເລັດໃນວຽກງານການປະກາດອານາຈັກຂອງພຣະເຈົ້າແລະປິ່ນປົວຄົນເຈັບປ່ວຍ, ພວກເຂົາຍ່ອມມີຄວາມພາກພູມໃຈໃນພາລະກິດແລະຄວາມສາມາດຂອງຕົນ. ແຕ່ພວກເຂົາອາດລືມໄປວ່າມີພຣະເຈົ້າຢູ່ຄຽງຂ້າງພວກເຂົາ. ພຣະອົງປະຕິບັດວຽກງານຮ່ວມກັບພວກເຂົາ. ດັ່ງນັ້ນ, ການພັກຜ່ອນໃນບ່ອນງຽບສະງັດຈຶ່ງເປັນໂອກາດໃຫ້ພວກເຂົາໄດ້ເຫັນເຖິງສິ່ງມະຫັດສະຈັນຕ່າງໆທີ່ພຣະເຈົ້າກະທຳຜ່ານທາງພວກເຂົາ.

ສຳລັບພວກເຮົາຜູ້ເປັນກຣິສຕັງ, ເປັນລູກສິດຂອງພຣະເຢຊູເຈົ້າກໍເຊັ່ນດຽວກັນ, ພວກເຮົາຕ້ອງການເວລາເພື່ອພັກຜ່ອນໃນພຣະເຈົ້າ. ເພື່ອເບິ່ງຄືນຊີວິດຂອງພວກເຮົາໃນແຕ່ລະວັນ. ເບິ່ງຄືນພາລະໜ້າທີ່ຊຶ່ງພຣະເຈົ້າໄດ້ມອບໝາຍໃຫ້ພວກເຮົາໃນແຕ່ລະມື້. ເບິ່ງຄືນຈຸດດີແລະຈຸດທີ່ຍັງບົກຜ່ອງໃນຊີວິດຂອງພວກເຮົາ. ເມື່ອພວກເຮົາມີໂອກາດທົບທວນຊີວິດຂອງຕົນດັ່ງນີ້ແລ້ວ, ພວກເຮົາຈະເຫັນວ່າບໍ່ແມ່ນພວກເຮົາເອງທີ່ກະທຳສິ່ງຕ່າງໆ ແຕ່ແມ່ນພຣະເຈົ້າໄດ້ກະທຳຜ່ານທາງພວກເຮົາ. ແລະຖ້າບໍ່ມີພຣະອົງແລ້ວ, ພວກເຮົາບໍ່ສາມາດກະທຳສິ່ງໃດໄດ້ເລີຍ. ດັ່ງນີ້ແລ, ວັນອາທິດສຳລັບພວກເຮົາຈຶ່ງເປັນວັນພັກຜ່ອນໃນພຣະເຈົ້າ. ຍ້ອນພວກເຮົາມີໂອກາດມາຫາພຣະອົງ, ມາໂມທະນາຄຸນພຣະອົງສຳລັບທຸກສິ່ງຢ່າງທີ່ພຣະອົງໄດ້ປະທານໃຫ້ພວກເຮົາໃນອາທິດໜຶ່ງທີ່ຜ່ານມາ. ແລະກໍເປັນໂອກາດໃຫ້ພວກເຮົາໄດ້ໂອ້ລົມສົນທະນາກັບພຣະເຈົ້າ, ໄດ້ຂໍໂທດນຳພຣະອົງສຳລັບສິ່ງທີ່ຍັງຂາດຕົກບົກຜ່ອງ. ເພື່ອພວກເຮົາຈະໄດ້ພ້ອມກັບພຣະອົງສືບຕໍ່ຊີວິດພາລະກິດໃນອາທິດທີ່ຈະມາເຖິງ.

**ພາວະນາ**

ໂອພຣະເຢຊູເຈົ້າ, ຜ່ານທາງວາຈາຂອງພຣະອົງວັນນີ້, ໂຜດຊ່ວຍລູກໃຫ້ເຂົ້າໃຈເຖິງຄວາມສຳຄັນຂອງການພັກຜ່ອນໃນພຣະເຈົ້າ, ການພົບປະສົນທະນາກັບພຣະອົງໃນຄຳພາວະນາ, ໃນວາຈາຂອງພຣະອົງ.ແລະເປັນຕົ້ນໃນມະຫາບູຊາມິຊຊາອັນແມ່ນຈຸດສຸດຍອດແຫ່ງຊີວິດກຣິສຕະຊົນຂອງລູກ. ເພື່ອລູກຈະໄດ້ພົບກັບຄວາມທຸເລົາບັນເທົາຢ່າງແທ້ຈິງໃນພຣະອົງ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ